Lao

# ລາຍລະອຽດ ກ່ຽວກັບກົດບັນຍັດ ຂອງການບັງຄັບໃຫ້ຍົກຍ້າຍຈາກບ້ານພັກ

ຂໍ້ຫ້າມຊົ່ວນີ້ ໄດ້ດຳເນີນໄປຈົນເຖິງວັນທີ 15 ຂອງເດືອນ ຕຸລາ.

ໃນວັນທີ 29 ຂອງເດືອນ ກຸມພາ ທ່ານເຈົ້າແຂວງ ອິນສະລີ ໄດ້ກຳນົດມາດຕາການ 20-5 ແຈ້ງການກ່ຽວກັບເຫດການສຸກເສີນໄປເຖິງທຸກໆຫົວເມືອງຂອງລັດວໍຊິງຕັນ ສາຍເຫດເກີດຈາກໂລກລະບາດສາຍພັນໂຄວິດ19 (COVID-19) ຂອງປີ 2019 ທີ່ໄດ້ແຜ່ລະບາດທົ່ວສະຫາລັດອະເມລິກາ ແລະໂດຍສະເພາະການແຜ່ລະບາດຈາກບຸກຄົນສູ່ບຸກຄົນໃນລັດວໍຊິງຕັນ. ກົດລະບຽບບັງຄັບຊົ່ວຄາວນີ້ໄດ້ນຳໃຊ້ໂດຍສະເພາະໃນລັດວໍຊິງຕັນນີ້ ກໍເພື່ອເປັນການຊ່ວຍເຫຼືອ ຊີວິດ, ສຸຂພາບ ແລະ ປ້ອງກັນໄພອັນຕລາຍທີ່ຈະເກີດຂື້ນຈາກພົນກະທົບຈາກໄພວ່າງງານ ຫຼືຕັດເວລາຊົ່ວໂມງທຳງານເຮັດໃຫ້ມີພົນສະທອ້ນ ບໍ່ມີຄວາມສາມາດຈ່າຍຄ່າເຊົ່າໄດ້. ເນື່ອງຈາກໄດ້ຮັບພົນສະທ້ອນຈາກໂລກລະບາດນີ້.

ພິເສດສຸດກໍ່ເພື່ອເປັນການປ້ອງກັນຊົ່ວຄາວກ່ຽວກັບ

1. ຜູ້ບໍ່ມີຄວາມສາມາດຈ່າຍຄ່າເຊົ່າ.

2. ອະນຸຍາດໃຫ້ບາງວຽກງານ ທີ່ມີຄວາມສາມາດເຮັດຢູ່ບ້ານໄດ້ ຍົກເວັ້ນແຕ່ວຽກງານທີ່ສຳຄັນແລະຈຳເປັນ

ທີ່ຕ້ອງໄດ້ໄປ.

3. ເພື່ອເປັນການຮັກສາສຸກຂະພາບ ແລະ ປອດໄພພ້ອມຊ່ວຍໃຫ້ລຸດຜ່ອນການແຜ່ລະບາດ ຂອງພຍາດໂຄວິດ19 (COVID-19) ໃນລັດວໍຊິງຕັນ.

<u>ນີ້ຄືລາຍລະອຽດຂອງການປະກາດຢ່າງເປັນທາງການຂອງເຈົ້າໜ້າທີ່ຂອງແຂວງກຳແພງນະຄອນ</u>

ຊຶ່ງມີລາຍລະອຽດດັ່ງຕໍ່ລົງໄປນີ້:

1. ກົດຂໍ້ບັງຄັບນີ້ບໍ່ແມ່ນທ່ານຈະບໍ່ໄດ້ຈ່າຍຄ່າເຊົ່າ ພາຍໃຕ້ກົດບັນຍັດສະບັບນີ້,ເຈົ້າຂອງບ້ານພັກບໍ່ສາມາດຂື້

ຄ່າເຊົ່າແກ່ຜູ້ເຊົ່າ ແລະ ເຈົ້າຂອງບ້ານພັກຄວນມີໂຄງການໃຫ້ຜູ້ເຊົ່າຈ່າຍຄືນຄ່າເຊົ່າໄດ້ຕາມພາຍຫຼັງ.

ເຈົ້າຂອງບ້ານພັກ ບໍ່ສາມາດຂື້ນຄ່າປັບໃໝເພີ້ມເຕີມຕໍ່

ຜູ້ເຊົ່າທີ່ບໍ່ມີຄວາມສາມາດຈ່າຍໄດ້ຕາມຂໍ້ກຳນົດທີ່ກຳນົດໄວ້ກຳຕາມ.

ຜູ່ເຊົ່າຈະສາມາດຖືກໄລ່ອອກຈາກທີ່ພັກເຊົ່າໃນກໍລະນີອື່ນໆເຊັ່ນ ທຳຄວາມເສຍຫາຍແກ່ສະຖານທີ່ພັກ

ເຊົ່າຫຼືສ້າງຄະດີທີ່ຜິດຕໍ່ກົດໝາຍຕ່າງໆ.

2. ກົດບັນຍັດສະບັບນີ້ແມ່ນທ່ານ ອິນສະລີໄດ້ສ້າງຂື້ນເພື່ອເປັນການປ້ອງກັນບໍ່ໃຫ້ເຈົ້າຂອງບ້ານພັກ
ສ້າງເງື່ອນໄຂຂັບໄລ່

ແບບບໍ່ຖືກຕ້ອງ ແລະ ສ້າງກົດໝາຍປ້ອງກັນຜູ່ເຊົ່າບ້ານໃຫ້ໃຊ້ສິດຢ່າງຖືກຕ້ອງຕາມກົດໝາຍ.

3. ຜູ່ເຊົ່າບໍ່ສາມາດຖືກໄລ່ອອກຈາກບ້ານພັກໃນຍາມສຸກເສີນເຊັ່ນນີ້ ນອກຈາກໄປທຳຄວາມເສຍຫາຍໃຫ້ແກ່ສະຖານທີ່

ພັກເຊົາ, ເຈົ້າຂອງບ້ານພັກມີຄວາມຈຳເປັນທີ່ຕ້ອງຂາຍບ້ານພັກ ຫຼືຍ້າຍສະຖານທີ່ໃໝ່.
4. ຖ້າເຈົ້າຂອງບ້ານພັກຫາກທຳຜິດຕໍ່ກົດບັນຍັດນີ້ທ່ານສາມາດສະເໜີເຂົ້າໄປຫາເຈົ້າເຈົ້າໜ້າທີ່ (Office of the Attorney General of Washington State) ຂອງລັດວໍຊິງຕັນ.
5. ພວກທ່ານສາມາດໃຊ້ຈົດໝາຍສະບັບນີ້ ສົ່ງໄປຫາເຈົ້າຂອງບ້ານພັກ
ຫາກທ່ານໄດ້ຮັບການກ່າວເຕືອນແບບບໍ່ຖືກຕ້ອງຕາມກົດບັນຍັດນີ້, ທ່ານສາມາດສົ່ງ ໜັງສືສັນຍາສະບັບນີ້ (COVID-19 Lease Amendment Toolkit) ເພື່ອເປັນການທຳຄວາມເຂົ້າໃຈກັບເຈົ້າຂອງບ້ານພັກ.
6. ມີຫຼາຍໆ ອົງການຊ່ວຍເຫຼືອ (COVIDFinancialAssistance)
ທາງດ້ານການເງິນເພື່ອເປັນການບັນເທົາທຸກທີ່ໄດ້ຮັບຜົນກະທົບຈາກພະຍາດໂຄວິດ19 (COVID-19) .